ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 587 /ຫສນຍ
ນະຄອນຫຼວງວຽງຈັນ, ວັນທີ 01 ມິຖຸນາ 2021

# ແຈ້ງການ

ຮຽນ: - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ທີ່ເຄົາລົບ.
- ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື.
- ທ່ານ ລັດຖະມົນຕີ ກະຊວງການເງິນ ທີ່ນັບຖື.
- ທ່ານ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ທີ່ນັບຖື.
- ທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ທີ່ນັບຖື.
- ທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ທີ່ນັບຖື.

ເລື່ອງ: ທິດຊີ້ນຳຕໍ່ກັບການຈັດຕັ້ງຜັນຂະຫຍາຍ ຜົນກອງປະຊຸມປຶກສາຫາລືຮ່ວມກັນ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຄັ້ງວັນທີ 28 ພຶດສະພາ 2021.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 3 ມີນາ 2017;
- ອີງຕາມ ຂໍ້ຕົກລົງນາຍົກລັດຖະມົນຕີ ວ່າດ້ວຍລະບຽບການ ແລະ ກົນໄກເຮັດວຽກຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 20 ເມສາ 2021;
- ອີງຕາມ ການລາຍງານຂອງບໍລິສັດ ປີໂຕລ້ຽມເທຣດດິ້ງ ລາວ ມະຫາຊົນ ຄັ້ງວັນທີ 28 ພຶດສະພາ 2021;
- ອີງຕາມ ການຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ໃນກອງປະຊຸມປຶກສາຫາລືຮ່ວມກັນ ລະຫວ່າງ ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກະຊວງພະລັງງານ ແລະ ບໍ່ແຮ່, ທະນາຄານແຫ່ງ ສປປ ລາວ ແລະ ບໍລິສັດ ປີໂຕລ້ຽມເທຣດດິ້ງ ລາວ ມະຫາຊົນ ໃນວັນທີ 28 ພຶດສະພາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ຕໍ່ກັບການຈັດຕັ້ງຜັນຂະຫຍາຍຜົນຂອງກອງປະຊຸມປຶກສາຫາລືຮ່ວມກັນ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມາຍັງທ່ານ ຊາບດັ່ງນີ້:

**1. ໃຫ້ກະຊວງການເງິນ ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບການສະເໜີສ້າງຕັ້ງໜ່ວຍງານຮ່ວມພາກລັດ ແລະ ເອກະຊົນ (ບໍລິສັດ Holding) ເພື່ອປະຕິບັດໜ້າທີ່ໃນການບໍລິຫານຈັດການໜີ້ສິນ, ພັນທະບັດ, ການລະດົມທຶນ, ການດຶງດູດການລົງທຶນ, ວຽກງານປະຊາສຳພັນ ແລະ ວຽກງານອື່ນທີ່ຕິດພັນ ເພື່ອໃຫ້ລັດຖະບານ ພິຈາລະນາຕາມຄວາມເໝາະສົມ.**

**2. ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເພື່ອແຕ່ງຕັ້ງຜູ້ຕາງໜ້າຈາກພາກເອກະຊົນ ເພີ່ມເຂົ້າໃນໜ່ວຍງານຄົ້ນຄວ້າ ແລະ ແກ້ໄຂສະພາບຄວາມຫຍຸ້ງຍາກທາງດ້ານ**



Scanned with CamScanner

ເສດຖະກິດ-ການເງິນ ທີ່ຈະສ້າງຂຶ້ນ, ໂດຍໃຫ້ຄັດເລືອກເອົາຜູ້ທີ່ມີຄວາມຮູ້ຄວາມສາມາດ, ຜູ້ທີ່ມີປະສົບການຕົວຈິງ ທັງແມ່ນຜູ້ທີ່ສະໝັກໃຈ ແລະ ມີຄວາມເສຍສະຫຼະ ປະກອບສ່ວນເຂົ້າໃນວຽກງານດັ່ງກ່າວ.

3. ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງສົມທົບກັບ ກະຊວງການເງິນ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ພາກສ່ວນກ່ຽວຂ້ອງ ສັງລວມ ແລະ ກວດກາຄືນໂຄງການຕ່າງໆ ທີ່ໄດ້ເຊັນສັນຍາກັບລັດຖະບານຜ່ານມາ ທີ່ໃກ້ຈະຮອດກຳນົດໝົດອາຍຸສຳປະທານ ແລະ ໃຫ້ຄົ້ນຄວ້າວິທີການຕ່າງໆ ເພື່ອຊຸກຍູ້ໃຫ້ຜູ້ພັດທະນາໂຄງການປະ ກອບສ່ວນຈ່າຍພັນທະລ່ວງໜ້າໃຫ້ລັດຖະບານ ດ້ວຍການປັບປຸງສັນຍາສຳປະທານທີ່ເພີ່ມອາຍຸສຳປະທານໂຄງການຕາມຄວາມເໝາະສົມ ແລະ ນະໂຍບາຍອື່ນໆໃຫ້ບັນດາໂຄງການຕາມຄວາມເໝາະສົມ. ພ້ອມດຽວກັນນັ້ນ ກໍ່ສົມທົບກັບກະຊວງການເງິນ ຄົ້ນຄວ້າການສ້າງຕັ້ງເຂດການຄ້າປອດພາສີ ເພື່ອດຶງດູດການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ໃນຕໍ່ໜ້າ.

- ໃຫ້ສິ່ງຮ່າງວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ ໃຫ້ບໍລິສັດ ປີໂຕລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບັນດາບໍລິສັດ ອື່ນໆ ເພື່ອປະກອບຄຳຄິດຄຳເຫັນ ເຂົ້າໃນວາລະແຫ່ງຊາດ ຈາກນັ້ນ ສັງລວມຄວາມຄິດເຫັນດັ່ງກ່າວ ລາຍງານລັດຖະບານ ເພື່ອນຳສະເໜີຜ່ານກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ສະໄໝວິສາມັນ ແລະ ສະເໜີສະພາແຫ່ງຊາດຮັບຮອງ.

4. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນໃຈກາງສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າກົນໄກການຊື້-ຂາຍພະລັງງານໄຟຟ້າ ຂອງໂຄງການຕ່າງໆ ກັບຕະຫຼາດຕ່າງປະເທດທີ່ຮັບຊື້. ໂດຍໃຫ້ພາກສ່ວນກ່ຽວຂ້ອງຂອງລັດເປັນເຈົ້າການຊ່ວຍຜູ້ພັດທະນາໂຄງການພະລັງງານໄຟຟ້າ ໃນການປະສານ ແລະ ເຈລະຈາຕໍ່ລອງລາຄາຊື້-ຂາຍໄຟຟ້າໂດຍກົງກັບຕະຫຼາດບັນດາປະເທດທີ່ໄດ້ມີແຜນຮ່ວມມືດ້ານພະລັງງານ ກັບ ສປປ ລາວ ເຮົາ ເພື່ອເຮັດໃຫ້ກົນໄກການເຈລະຈາຊື້-ຂາຍ ໄວຂຶ້ນ.

5. ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ສົມທົບກັບ ກະຊວງຍຸຕິທຳ ແລະ ພາກສ່ວນກ່ຽວຂ້ອງ ຮີບຮ້ອນຮ່າງດຳລັດ ວ່າດ້ວຍທ່າບົກ ແລະ ຮ່າງນິຕິກຳຕ່າງໆທີ່ຕິດພັນກັບການຂົນສົ່ງສິນຄ້າຜ່ານແດນ ໃຫ້ສຳເລັດໂດຍໄວ ເພື່ອເປັນບ່ອນອີງໃນການເຊື່ອມໂຍງການຂົນສົ່ງສິນຄ້າຜ່ານແດນກັບສາກົນ ແລະ ເປັນບ່ອນອີງໃຫ້ແກ່ຜູ້ປະກອບການສາມາດດຳເນີນກິດຈະການທີ່ຕິດພັນດັ່ງກ່າວຢ່າງຄ່ອງຕົວ ແລະ ສ້າງລາຍຮັບເຂົ້າງົບປະມານຂອງລັດ.

6. ໃຫ້ທະນາຄານແຫ່ງ ສປປ ລາວ ສົມທົບກັບ ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຄົ້ນຄວ້າຄືນກ່ຽວກັບກົນໄກການຄຸ້ມຄອງບັນດາຮ້ານແລກປ່ຽນເງິນ ໃຫ້ການເຄື່ອນໄຫວພາຍໃຕ້ທະນາຄານທຸລະກິດ ພ້ອມທັງໃຫ້ຄົ້ນຄວ້າຕື່ມກ່ຽວກັບຮູບແບບການເຄື່ອນໄຫວຂອງຮ້ານແລກປ່ຽນເງິນຕາ ໂດຍອາດອະນຸຍາດໃຫ້ສະເພາະແຕ່ຮັບຊື້ເງິນຕາຕ່າງປະເທດ, ສ່ວນຂາຍອອກ ແມ່ນອະນຸຍາດໃຫ້ຂາຍໃຫ້ທະນາຄານເທົ່ານັ້ນ ແຕ່ບົນພື້ນຖານຮ້ານແລກປ່ຽນເງິນຕາ ກໍຕ້ອງມີສ່ວນຕ່າງຈາກອັດຕາຊື້-ຂາຍທີ່ເໝາະສົມ ເພື່ອສາມາດຄວບຄຸມອັດຕາແລກປ່ຽນ ແລະ ການເໜັງຕີງຄ່າຂອງເງິນ ໄປໃນທິດທາງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX ຂອງລັດຖະບານ.

7. ໃຫ້ກະຊວງ-ຂະແໜງການ ທີ່ໄດ້ຮັບມອບໝາຍວຽກງານຂ້າງເທິງນັ້ນ ລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ລັດຖະບານ ຊາບ ຊ້າສຸດບໍ່ໃຫ້ກາຍວັນທີ 21 ມິຖຸນາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ຈ່ຳເຈນ ວົງໂພສີ

**ບ່ອນນຳສົ່ງ:**

1. ນາຍົກ-ຮອງນາຍົກລັດຖະມົນຕີ 01 ສະບັບ
2. ຫ້ອງວ່າການສູນກາງພັກ 01 ສະບັບ
3. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 01 ສະບັບ
4. ກະຊວງຍຸຕິທຳ 01 ສະບັບ
5. ກົມກ່ຽວຂ້ອງ ຫສນຍ ປອນລະ 01 ສະບັບ
6. ສຳເນົາ 01 ສະບັບ



Scanned with CamScanner